| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ການຈົດທະບຽນອະນຸສິດທິບັດ | |
| ປະເພດຂອງໃບອະນຸຍາດ | ການຂຶ້ນທະບຽນ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoST-IPD-15 | 27.09.2017 | ກົມຊັບສິນທາງປັນຍາ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | ທຸກພາກສ່ວນ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ຈົດທະບຽນເພື່ອໄດ້ຮັບການປົກປ້ອງສິດ ເຫລືອ ສິ່ງປະດິດ ທີ່ຖືກສ້າງຂຶ້ນ ພາຍໃຕ້ກົດໝາຍ ຂອງ ສປປ ລາວ ແລະ ພາຍໃນຂອບເຂດທົ່ວ ສປປ ລາວ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ຜູ້ເປັນເຈົ້າຂອງ ສິ່ງປະດິດ ຊຶ່ງໝາຍເຖິງ ຜົນງານການປະດິດໃໝ່ ທີ່ໄດ້ຈາກການປັບປຸງ ທາງດ້ານເຕັກນິກ ດ້ວຍການນໍາໃຊ້ເຕັກນິກ ທີ່ບໍ່ສູງຄືການປະດິດສ້າງ ແລະ ເປັນຜູ້ທີ່ມີຈຸດປະສົງຈະໄດ້ຮັບການປົກປ້ອງ ສິ່ງປະດິດ ດັ່ງກ່າວ ໃນຂອບເຂດ ສປປ ລາວ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | www.most.gov.la |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | 1. ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ຢູ່ຕ່າງປະເທດ ຊຶ່ງມີຈຸດປະສົງຂໍຈົດທະບຽນຊັບສິນທາງປັນຍາ ຢູ່ ສປປ ລາວ ຕ້ອງໄດ້ມີຕົວແທນ ທີ່ຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ ເພື່ອດໍາເນີນທຸລະກໍາ ທີ່ກ່ຽວຂ້ອງກັບ ວຽກງານຊັບສິນທາງປັນຍາ ຢູ່ ສປປ ລາວ 2. ສໍານວນຄໍາຮ້ອງຂໍຈົດທະບຽນ ແລະ ເອກະສານຄັດຕິດອື່ນໆ ສາມາດເຮັດເປັນພາສາລາວ ຫລື ອັງກິດກໍ່ໄດ້. ຖ້າວ່າ ຄໍາຮ້ອງຂໍ ຫລື ເອກະສານ ທີ່ໄດ້ເຮັດເປັນພາສາອັງກິດ, ຕ້ອງຍື່ນສະບັບແປ ເປັນພາສາລາວ ໂດຍໄດ້ຮັບການຢັ້ງຢືນຄວາມຖືກຕ້ອງ ພາຍໃນ 90 ວັນຫລັງຈາກວັນໄດ້ຍື່ນຄໍາຮ້ອງຂໍ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| **ໄລຍະເວລາໃນການ ພິຈາລະນາຄຳຮ້ອງ ໃນການອອກໃບອະນຸຍາດ** | 360 | 1. ກົມຈະກວດສອບຄຳຮ້ອງຂໍຈົດທະບຽນເບື້ອງຕົ້ນ ເພື່ອຮັບປະກັນວ່າ ຄຳຮ້ອງຂໍນັ້ນ ຄົບຖ້ວນຖືກຕ້ອງຕາມແບບຟອມ ແລະ ໄດ້ຈ່າຍຄ່າທຳນຽມແລ້ວ ຫລືບໍ່ ກ່ອນ 2. ພາຍຫລັງການກວດສອບເບື້ອງຕົ້ນ: (i) ກົມຈະຈັດພິມເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບ ຊັບສິນອຸດສາຫະກຳ ໃນເດືອນທີສິບເກົ້າ ນັບແຕ່ວັນຍື່ນຄຳຮ້ອງ; ແລະ (ii) ດຳເນີນການກວດສອບເນື້ອໃນ ເພື່ອກຳນົດໃຫ້ຮູ້ວ່າ ມີຄວາມສອດຄ່ອງກັບເງື່ອນໄຂ ຕາມທີ່ກຳນົດໄວ້ໃນກົດໝາຍ ຫລືບໍ່ ໃນຂອບໄລຍະເວລາ 12 ເດືອນນັບແຕ່ວັນຍື່ນຄຳຮ້ອງຂໍ ແຕ່ ກໍລະນີຜູ້ຮ້ອງຂໍໄດ້ເຮັດການຄົ້ນຫາ ຫລື ກວດສອບໂດຍອົງການອື່ນມາກ່ອນແລ້ວ, ຜູ້ຮ້ອງຂໍ ສາມາດສະໜອງ ສຳເນົາຂອງບົດລາຍງານຈາກອົງການດັ່ງກ່າວ ແລະ ສະເໜີໃຫ້ກົມ ຮັບຮອງເອົາ ແທນທີ່ຈະດຳເນີນການຄົ້ນຫາ ຢູ່ ສປປ ລາວໄດ້ |
| **ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ** | 1. ສິ່ງປະດິດ ທີ່ຈະໄດ້ຮັບອະນຸສິດທິບັດ ຕ້ອງມີເງື່ອນໄຂ ຄື: (i) ຕ້ອງແມ່ນສິ່ງປະດິດໃໝ່ ຊຶ່ງຜ່ານມາບໍ່ໄດ້ເປັນທີ່ຮູ້ຈັກ ຫລື ຖືກນຳໃຊ້ ໃນ ສປປ ລາວ ພາຍໃນ 1 ປີກ່ອນວັນຍື່ນຄຳຮ້ອງ; (ii) ຕ້ອງມີການປັບປຸງເຕັກນິກໃໝ່ ທີ່ພົວພັນເຖິງຂັ້ນຕອນການປະດິດສ້າງ ຊຶ່ງອາດມີຂັ້ນຕອນຕ່ຳກວ່າ ຂັ້ນຕອນການປະດິດສ້າງ; ແລະ (iii) ຕ້ອງສາມາດນຳໃຊ້ໃຫ້ເປັນປະໂຫຍດໃນຂົງເຂດ ອຸດສາຫະກຳ, ຫັດຖະກຳ, ກະສິກຳ, ການປະມົງ, ການບໍລິການ ແລະ ອື່ນໆ 2. ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງສິດ ມີດັ່ງນີ້: (i) ເປັນພົນລະເມືອງລາວ ຫລື ຜູ້ທີ່ມີທີ່ຢູ່ອາໄສ ຢູ່ ສປປ ລາວ ຫລື ນິຕິບຸກຄົນ ຫລື ການຈັດຕັ້ງທີ່ສ້າງຕັ້ງຂຶ້ນ ພາຍໃຕ້ກົດໝາຍຂອງ ສປປ ລາວ; (ii) ບຸກຄົນທີ່ມີສັນຊາດ ຫລື ມີທີ່ຢູ່ອາໄສຢູ່ ປະເທດໃດໜຶ່ງ ຊຶ່ງເປັນພາຄີຂອງສົນທິສັນຍາປາຣີ ຫລື ຂໍ້ຕົກລົງສາກົນອື່ນ ກ່ຽວກັບ ການປົກປ້ອງຊັບສິນອຸດສາຫະກຳ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ; (iii) ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ມີສະຖານທີ່ດຳເນີນການຄ້າ ແລະ ອຸດສາຫະກຳຕົວຈິງ ແລະ ມີປະສິດທິຜົນ ຢູ່ໃນອານາເຂດຂອງປະເທດໃດໜຶ່ງ ທີ່ເປັນພາຄີຂອງ ສົນທິສັນຍາປາຣີ ຫລື ຂໍ້ຕົກລົງສາກົນອື່ນ ກ່ຽວກັບ ການປົກປ້ອງຊັບສິນອຸດສາຫະກຳ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ | |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | 1. ກໍລະນີທີ່ການປະດິດສ້າງ ນັ້ນບໍ່ເປັນໄປຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍ 2. ປະຕິເສດໃນກໍລະນີ: (i) ເພື່ອປ້ອງກັນການສະແຫວງຫາຜົນປະໂຫຍດທາງການຄ້າ, ປົກປ້ອງວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ ແລະ ສິນລະທຳ ລວມທັງ ການປົກປ້ອງຊີວິດຂອງມະນຸດ, ສັດ ຫລື ພືດ, ສຸຂະພາບ ຫລື ເພື່ອຫລີກເວັ້ນ ການກໍ່ຄວາມເສຍຫາຍທີ່ຮ້າຍແຮງ ຕໍ່ສິ່ງແວດລ້ອມ; ຫລື (ii) ເພື່ອປົກປ້ອງຄວາມ ໝັ້ນຄົງ ແລະ ສະຫງົບສຸກ ຂອງ ສປປ ລາວ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ບໍ່ມີ | 120 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ** | ເພື່ອຮັກສາອາຍຸການປົກປ້ອງນັ້ນ, ເຈົ້າຂອງອະນຸສິດທິບັດ ຕ້ອງຈ່າຍຄ່າທໍານຽມລ່ວງໜ້າ ແຕ່ລະປີ |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າແບບຟອມຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 710000.00 | 0.00 | 100000.00 | 810000.00 |
| **ຄໍາເຫັນ** | ອີງຕາມ ລັດຖະດໍາລັດ 03/ປທ<br>ຄ່າບໍລິການການຈົດທະບຽນແມ່ນຄໍານວນຕາມແຕ່ລະຂັ້ນຕອນຂອງການກວດສອບການຂໍຈົດທະບຽນ ລວມທັງໝົດຕໍ່າສຸດ 710,000 ກີບ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທໍານຽມແບບຟອມ ຄໍາຮ້ອງຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າແບບຟອມຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 1800000.00 | 0.00 | 5750000.00 | 7550000.00 |
| **ຄໍາເຫັນ** | ອີງຕາມ ລັດຖະດໍາລັດ 03/ປທ  1. ຄ່າທໍານຽມຈົດທະບຽນ ສໍາລັບໄລຍະເວລາ 10 ປີຂອງອາຍຸການຄຸ້ມຄອງ ແມ່ນຄິດໄລ່ໃນ ອັດຕາດັ່ງນີ້: i) 1st year = 200,000 LAK; (ii) 2nd year = 150,000 LAK; (iii) 3rd year = 200,000 LAK; (iv) 4th year = 300,000 LAK; (v) 5th year = 400,000 LAK; (vi) 6th year = 500,000 LAK; (vii) 7th year = 700,000 LAK; (viii) 8th year = 900,000 LAK; (ix) 9th year = 1,100,000 LAK; and (x) 10th year = 1,300,000 LAK  2. ຄ່າບໍລິການເພື່ອຮັກສາອາຍຸການຂອງອະນຸສິດທິບັດ ແມ່ນເກັບນັບຈາກປີທີ 2 ໃນອັດຕາ ປີລະ 200,000 ກີບ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ກົດລະບຽບ | ເລກທີ | ວັນທີ | ຄຳເຫັນ |
| ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ (ສະບັບປັບປຸງ) | 01/ສພຊ | 20.12.2011 | ພາກທີ III ຊັບສິນອຸດສາຫະກຳ ໝວດທີ 1 ເງື່ອນໄຂຂອງຊັບສິນອຸດສາຫະກຳ (ມາດຕາ 14) ໝວດທີ 2 ຊັບສິນອຸດສາຫະກຳທີ່ບໍ່ສາມາດຈົດທະບຽນ (ມາດຕາ 21) ໝວດທີ 3 ການປົກປ້ອງຊັບສິນອຸດສາຫະກຳ (ມາດຕາ 26, 27, 31, 37 ຫາ 41) ໝວດທີ 5 ອາຍຸການປົກປ້ອງຊັບສິນອຸດສາຫະກຳ (ມາດຕາ 49) |

| ເອກະສານປະກອບ |
|---|
| ຊື່ເອກະສານ |
| ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກກໍລະນີຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົວເອງ |
| ຂໍ້ຮຽກຮ້ອງຂໍຮັບສິດ |
| ບົດອະທິບາຍສິ່ງປະດິດ |
| ໃບຢັ້ງຢືນການຊຳລະຄ່າທຳນຽມ |
| ຮູບແຕ້ມ |
| ບົດສັງເຂບ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2017 | | |
| 2016 | | |